ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 538 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 21 / 08 / 25

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິຕົກລົງ ຂອງສະພາແຫ່ງຊາດ ສະບັບເລກທີ 05/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ໜັງສືສະເໜີ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 382/ຄຈສພ, ລົງວັນທີ 11 ສິງຫາ2025.

## ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ແນໃສ່ຈັດຕັ້ງ ແລະ ຜັນຂະຫຍາຍ ແນວທາງແຜນນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດແຕ່ລະໄລຍະ ໃນການພັດທະນາ ແລະ ຄຸ້ມຄອງເສດຖະກິດ-ສັງຄົມ, ການເງິນແຫ່ງລັດ ແລະ ລະບົບສະຖິຕິແຫ່ງຊາດ ລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໃຫ້ມີຄວາມກະທັດຮັດ, ໂລ່ງລ່ຽນ, ມີປະສິດທິພາບ, ເຂັ້ມແຂງ, ໂປ່ງໃສ, ໜັກແໜ້ນ ແລະ ທັນສະໄໝ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງການເງິນ ຂຽນເປັນຕົວອັກສອນຫຍໍ້ວ່າ: **"ກງ"** ແລະ ຂຽນເປັນພາສາອັງກິດວ່າ: **"Ministry of Finance"** ຂຽນເປັນຕົວອັກສອນຫຍໍ້ວ່າ **"MOF"** ແມ່ນກົງຈັກໜຶ່ງຂອງລັດຖະບານ, ມີພາລະບົດບາດເປັນເສນາທິການ ໃນການຄຸ້ມຄອງມະຫາພາກ ກ່ຽວກັບ ການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນການລົງທຶນຂອງລັດ, ແຜນພັດທະນາລະບົບສະຖິຕິແຫ່ງຊາດ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກະຊວງການເງິນ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ, ມະຕິ, ຄຳສັ່ງ ຂອງລັດຖະບານ ມາເປັນ ວິໄສທັດ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ;
2. ຄົ້ນຄວ້າ ສ້າງ, ປັບປຸງ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ພ້ອມທັງ ໂຄສະນາເຜີຍແຜ່, ຕິດຕາມ, ກວດກາ, ປະເມີນຜົນ ແລະ ການບັງຄັບໃຊ້ນິຕິກຳ ໃນຂົງເຂດວຽກງານຂອງຂະແໜງການເງິນ;
3. ສ້າງແຜນຍຸດທະສາດ ໃນການຄຸ້ມຄອງການປະກັນໄພ ເພື່ອສະເໜີ ລັດຖະບານພິຈາລະນາຕົກລົງ ໃນແຕ່ລະໄລຍະ;
4. ຄົ້ນຄວ້າສ້າງແຜນຍຸດທະສາດ ໃນການຄຸ້ມຄອງ ແລະ ພັດທະນາ ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງຂະແໜງການເງິນ ຕາມແຜນຍຸດທະສາດພັດທະນາຂະແໜງການເງິນແຫ່ງລັດ ໃນແຕ່ລະໄລຍະ;
5. ສ້າງ ແລະ ປັບປຸງ ວິໄສທັດ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນການລົງທຶນຂອງລັດ, ແຜນພັດທະນາຂະແໜງການເງິນ, ແຜນພັດທະນາລະບົບສະຖິຕິແຫ່ງຊາດ ໄລຍະ 5 ປີ, ໄລຍະກາງ (1+2) ແລະ ປະຈຳປີ ພ້ອມທັງ ຄົ້ນຄວ້າ, ຈັດສັນ, ດັດແກ້, ດັດສະເລ່ຍ, ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບ ການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ແຕ່ລະໄລຍະ ຂອບເຂດທົ່ວປະເທດ ແລະ ງົບປະມານຂອງກະຊວງການເງິນ ລວມທັງ ລາຍຈ່າຍທາງດ້ານການເງິນອື່ນທີ່ລັດຖະບານຮັບຜິດຊອບ ຕາມກົດໝາຍ ແລະ ລະບຽບການ;
6. ຄົ້ນຄວ້າ, ເກັບກຳ, ສຳຫຼວດ, ວິເຄາະ-ວິໄຈຂໍ້ມູນ ແລະ ເຜີຍແຜ່ຂໍ້ມູນ, ຂໍ້ມູນສະຖິຕິແຫ່ງຊາດ, ຂໍ້ມູນດ້ານເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ຄວາມໝັ້ນຄົງ, ການເງິນ-ງົບປະມານ, ການລົງທຶນ ຢູ່ພາຍໃນປະເທດ, ພາກພື້ນ ແລະ ສາກົນ ແຕ່ລະໄລຍະ ເພື່ອສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ປັບປຸງ ກົດໝາຍ, ນະໂຍບາຍ, ມາດຕະການ ທາງດ້ານການເງິນ-ງົບປະມານ, ພາສີ, ສ່ວຍສາອາກອນ, ຊັບສິນ, ໜີ້ສິນ, ການປະກັນໄພ, ການສະສົມ ແລະ ນະໂຍບາຍອື່ນ ໃນຂົງເຂດເສດຖະກິດ-ການເງິນ ພ້ອມທັງ ຄາດຄະເນສະຖານະການ ດ້ານການເງິນ-ງົບປະມານ ເປັນພື້ນຖານໃນການຫັນວຽກງານການເງິນໄປສູ່ມາດ ຕະຖານສາກົນ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
7. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າວິເຄາະ-ວິໄຈ, ຕີລາຄາ ແລະ ນຳສະເໜີນະໂຍບາຍ ແລະ ມາດຕະການຊຸກຍູ້ການຂະຫຍາຍຕົວເສດຖະກິດແຫ່ງຊາດ, ນະໂຍບາຍຄຸ້ມຄອງເສດຖະກິດມະຫາພາກ, ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ນະໂຍບາຍການພັດທະນາເສດຖະກິດແບບຍືນຍົງ ແລະ ສີຂຽວ, ນະໂຍບາຍການພັດທະນາແລວທາງເສດຖະກິດ ແລະ ເຂດຈຸດສຸມເສດຖະກິດ, ນະໂຍບາຍການພັດທະນາເສດຖະກິດ-ສັງຄົມ ເພື່ອສະໜັບສະໜູນການສ້າງ ແລະ ຕິດຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ໃນແຕ່ລະໄລຍະ;

8. ຄົ້ນຄວ້າສ້າງ ແລະ ຕີລາຄາການຈັດຕັ້ງປະຕິບັດ ວິໄສທັດ, ຍຸດທະສາດພັດທະນາການເງິນແຫ່ງລັດ ໃນແຕ່ລະໄລຍະ; ນໍາສະເໜີນະໂຍບາຍ ແລະ ມາດຕະການ ດ້ານລາຍຮັບ ແລະ ລາຍຈ່າຍ ແລະ ບັນດານະໂຍບາຍການຄຸ້ມຄອງຂະແໜງການເງິນ-ງົບປະມານແຫ່ງລັດ;

9. ເກັບກໍາ, ຄຸ້ມຄອງ ຖານຂໍ້ມູນຂອງພາກສ່ວນຕ່າງໆ ຢ່າງລວມສູນ ແຕ່ສູນກາງ ຮອດທ້ອງຖິ່ນ ເພື່ອເປັນພື້ນຖານໃນການຈັດເກັບລາຍຮັບຈາກພັນທະຕ່າງໆເຂົ້າງົບປະມານແຫ່ງລັດ ໃຫ້ມີຄວາມຖືກຕ້ອງ ແລະ ຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການ ພ້ອມທັງ ນໍາໃຊ້ເຂົ້າໃນການວິເຄາະ-ວິໄຈ ສະພາບການເກັບລາຍຮັບ ໃນແຕ່ລະໄລຍະ ໃຫ້ມີປະສິດທິຜົນສູງສຸດ;

10. ຄຸ້ມຄອງ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດການມອບພັນທະ ພາສີ-ສ່ວຍສາອາກອນ, ລາຍຮັບບໍ່ແມ່ນພາສີ-ສ່ວຍສາອາກອນ ແລະ ລາຍຮັບປະເພດອື່ນ ຕາມກົດໝາຍ ແລະ ລະບຽບການ;

11. ຄຸ້ມຄອງ, ຕິດຕາມ, ກວດກາ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ, ເງິນກູ້ຢືມ, ເງິນຝາກ, ເງິນຄໍ້າປະກັນ, ການລະດົມທຶນ ເພື່ອດຸ່ນດ່ຽງງົບປະມານ ແລະ ບໍລິຫານແຫຼ່ງເງິນ ຕາມກົດໝາຍ ແລະ ລະບຽບການ;

12. ຄົ້ນຄວ້າການສະເໜີ ສ້າງຕັ້ງ ຫຼື ຍຸບເລີກ ຫົວໜ່ວຍງົບປະມານແຫ່ງລັດຂັ້ນສອງ ທີ່ຂຶ້ນກັບຫົວໜ່ວຍງົບປະມານຂັ້ນໜຶ່ງ ລວມທັງ ຫົວໜ່ວຍວິຊາການເປັນເຈົ້າຕົນເອງ ຂອງບັນດາຂະແໜງ ການຂັ້ນສູນກາງ ແລະ ທ້ອງຖິ່ນ;

13. ຄຸ້ມຄອງ, ຕິດຕາມ, ກວດກາ ການນໍາໃຊ້, ການປົກປັກຮັກສາ, ການສະສາງ ແລະ ການພັດທະນາ ບັນດາຊັບສິນຂອງລັດ; ຄຸ້ມຄອງຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ;

14. ຄົ້ນຄວ້າ ສ້າງ, ປັບປຸງ, ປະເມີນ, ກວດກາ ບັນດານະໂຍບາຍ ແລະ ນິຕິກໍາຕ່າງໆ ທີ່ຕິດພັນກັບການຄຸ້ມຄອງ ແລະ ນໍາໃຊ້ລາຍຈ່າຍງົບປະມານແຫ່ງລັດ ເພື່ອສະເໜີລັດຖະບານ ພິຈາລະນາ;

15. ສ້າງລະບຽບການບັນຊີ, ມາດຕະຖານບັນຊີ ແລະ ກວດສອບອິດສະລະ, ກວດກາການເງິນ, ສາລະບານບັນຊີ-ງົບປະມານ, ປິດບັນຊີງົບປະມານ-ຄັງເງິນ ແລະ ການເປີດເຜີຍງົບປະມານ ເພື່ອນໍາສະເໜີລັດຖະບານພິຈາລະນາ; ຄຸ້ມຄອງ, ຕິດຕາມ, ກວດກາ ການປະຕິບັດວຽກງານບັນຊີ ແລະ ກວດສອບອິດສະລະ ພ້ອມທັງ ດໍາເນີນວຽກງານການເງິນ ແລະ ຄຸ້ມຄອງເອກະສານລາຍງານການເງິນ;

16. ຄຸ້ມຄອງ, ຕິດຕາມ, ກວດກາ ການເຄື່ອນໄຫວບັນຊີ ແລະ ສັງລວມທຸກແຫຼ່ງເງິນຂອງລັດ ເຂົ້າບັນຊີລວມສູນຄັງເງິນ ຜ່ານລະບົບຄຸ້ມຄອງຂໍ້ມູນຂ່າວສານການເງິນພາກລັດ;

17. ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ບຸກຄົນ, ນິຕິບຸກຄົນ, ເປົ້າໝາຍຖືກກວດສອບ ແລະ ການຈັດຕັ້ງທີ່ເຄື່ອນໄຫວວຽກງານ ກ່ຽວກັບ ບັນຊີ ແລະ ກວດສອບອິດສະລະ ໃນການປະຕິບັດຕາມກົດໝາຍວ່າດ້ວຍການບັນຊີ ແລະ ການກວດສອບອິດສະລະ;

18. ຄົ້ນຄວ້າ, ຜັນຂະຫຍາຍ ນິຕິກໍາ ກ່ຽວກັບ ການປະຢັດ ແລະ ຕ້ານການຟຸມເຟືອຍ, ລົດບໍລິຫານລັດ ແລະ ການຊົມໃຊ້ຊັບສິນອື່ນໆ ຕາມການຕົກລົງຂອງລັດຖະບານ;

19. ນໍາພາ-ຊີ້ນໍາດ້ານວິຊາການ ກ່ຽວກັບ ການປະເມີນໂຄງການລົງທຶນຂອງລັດ ກ່ອນການພິຈາລະນາເຂົ້າແຜນການລົງທຶນ, ໃນໄລຍະຈັດຕັ້ງປະຕິບັດໂຄງການ, ສໍາເລັດໂຄງການ 100% ກ່ອນການມອບ-ຮັບ, ປະເມີນໂຄງການພາຍຫຼັງການນໍາໃຊ້ແຕ່ 2-5 ປີ ແລະ ລັດຮ່ວມລົງທຶນ, ເງິນກູ້ຢືມໃສ່ໂຄງການທີ່ລັດຄໍ້າປະກັນ ແລະ ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ; ຄົ້ນຄວ້າ, ວິໄຈ ປະເມີນ ຫັກລົບມູນຄ່າ ແລະ ຮັບຮອງຜົນການປະເມີນ, ອອກໃບຢັ້ງຢືນ ໂຄງການລົງທຶນຂອງລັດ (ລວມທັງ ໂຄງການທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA: ໂຄງການສົມທົບ ແລະ ໂຄງການກູ້ຢືມ)) ກ່ອນພິຈາລະນາ ເຂົ້າແຜນການລົງທຶນຂອງລັດ; ປະເມີນຜົນ ໂຄງການລົງທຶນຂອງລັດ ໄລຍະການຈັດຕັ້ງປະຕິບັດ ແລະ ໂຄງການສໍາເລັດ 100% ກ່ອນການມອບ-ຮັບ, ປະເມີນໂຄງການພາຍຫຼັງການນໍາໃຊ້ແຕ່

2-5 ປີ ແລະ ລັດຮ່ວມລົງທຶນ, ເງິນກູ້ຢືມໃສ່ໂຄງການທີ່ລັດຄ້ຳປະກັນ ແລະ ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ; ຄົ້ນຄວ້າ ປະເມີນຜົນ ໃນກໍລະນີມີການສະເໜີ ດັດແກ້ ໂຄງການລົງທຶນຂອງລັດ;

20. ປະເມີນ ແລະ ປະເມີນຜົນ ໂຄງການລົງທຶນຂອງລັດ (ລວມທັງ ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ODA: ໂຄງການສົມທົບ ແລະ ໂຄງການກູ້ຢືມ) ໃນການຄຸ້ມຄອງໂຄງການລົງ ທຶນຂອງລັດ ພ້ອມທັງ ຄົ້ນຄວ້າຈັດລຽງບູລິມະສິດໂຄງການລົງທຶນຂອງລັດ ທີ່ໄດ້ຜ່ານການປະເມີນ ເພື່ອສະຫຼຸບລາຍງານລັດຖະບານ ກ່ອນສະເໜີເຂົ້າແຜນ;

21. ຄຸ້ມຄອງ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແລະ ໂຄງການລົງທຶນຂອງລັດ (ລວມທັງ ໂຄງການທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ODA: ໂຄງການສົມທົບ ແລະ ໂຄງການກູ້ຢືມ);

22. ຄຸ້ມຄອງ, ຕິດຕາມ, ຊຸກຍູ້, ປະເມີນຜົນ ໂຄງການເງິນກູ້ຢືມ ແລະ ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ເພື່ອຮັບປະກັນການນຳໃຊ້ໃຫ້ມີປະສິດທິຜົນສູງ;

23. ເປັນເຈົ້າການ ໃນການຄົ້ນຄວ້າ ແລະ ກຳນົດນະໂຍບາຍພັນທະທາງດ້ານການເງິນ ເພື່ອສົ່ງເສີມການລົງທຶນເອກະຊົນ ພາຍໃນ ແລະ ຕ່າງປະເທດ, ການລົງທຶນໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;

24. ເປັນເຈົ້າການ ຄົ້ນຄວ້າພິຈາລະນາ ແລະ ຄຸ້ມຄອງ ການປະຕິບັດນະໂຍບາຍພັນທະທາງດ້ານການເງິນ ທີ່ຕິດພັນກັບນະໂຍບາຍສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການກຳນົດ;

25. ຄົ້ນຄວ້າເຊື່ອມສານນະໂຍບາຍເພື່ອຫຼຸດຜ່ອນຄວາມສ່ຽງຈາກໄພພິບັດທຳມະຊາດ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ; ຄົ້ນຄວ້າສັງລວມການສະເໜີໂຄງການແກ້ໄຂສຸກເສີນ ແລະ ໂຄງການຟື້ນຟູຜົນກະທົບຈາກໄພພິບັດ ຕາມການສະເໜີຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ພ້ອມທັງຕິດຕາມ, ຊຸກຍູ້ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດຕໍ່ລັດຖະບານ;

26. ຕິດຕາມການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການທີ່ກ່ຽວພັນກັບການພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ໃນແຕ່ລະໄລຍະ;

27. ຄົ້ນຄວ້າ ແລະ ພິຈາລະນາ ອອກ, ໂຈະຊົ່ວຄາວ, ຖອນ ຫຼື ລຶບລ້າງ ໃບອະນຸຍາດດຳເນີນທຸລະກິດ ດ້ານປະກັນໄພ, ປະກັນໄພຕໍ່, ບັນຊີ ແລະ ກວດສອບອິດສະລະ, ກິດຈະການຫວຍ, ກາຊິໂນ, ທວາຍຜົນ, ສະໂມສອນຕູ້ເກມ, ໂລຈິສຕິກ, ລະບົບສາງພາສີ, ເຂດປອດພາສີ, ຮ້ານປອດພາສີ, ທີ່ປຶກສາທາງດ້ານການເງິນ ແລະ ຂະແໜງການອື່ນໆ ທີ່ຂຶ້ນກັບການຄຸ້ມຄອງຂອງກະຊວງການເງິນ ຕາມກົດໝາຍ ແລະ ລະບຽບການ;

28. ສ້າງ ແຜນຍຸດທະສາດ ໄລຍະກາງ, ໄລຍະຍາວ ໃນການຄຸ້ມຄອງ ແລະ ບໍລິຫານໜີ້ສິນສາທາ ລະນະ ຕາມກົດໝາຍ ແລະ ສອດຄ່ອງກັບມາດຕະຖານສາກົນ;

29. ນຳພາ, ຊີ້ນຳ, ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ສະໜັບສະໜູນ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະຖິຕິ ແລະ ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ແບບຍືນຍົງ; ກຳນົດຕົວຊີ້ວັດ ເພື່ອຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ ແລະ ສະຫຼຸບສັງລວມລາຍງານ ການຈັດຕັ້ງປະຕິບັດວຽກງານສະຖິຕິ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

30. ເປັນເຈົ້າການ ຊຸກຍູ້, ຕິດຕາມ, ກວດກາ, ປະເມີນ ແລະ ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດ ວິໄສທັດ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນການລົງທຶນຂອງລັດ, ແຜນພັດທະນາລະບົບສະຖິຕິແຫ່ງຊາດ, ແຜນການ, ແຜນງານ ແລະ ໂຄງການລະອຽດ ໃນແຕ່ລະໄລຍະ;

31. ຄົ້ນຄວ້າ ແລະ ຜັນຂະຫຍາຍຍຸດທະສາດ, ນິຕິກຳກ່ຽວກັບວຽກງານ ກວດກາພັກ, ກວດກາການເງິນ, ກວດກາການລົງທຶນ, ການສະກັດກັ້ນຕ້ານການສໍ້ລາດບັງຫຼວງ, ແກ້ໄຂຜົນການກວດກາ-ກວດສອບ; ແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານ-ລັດຖະກອນ ໃນການຄຸ້ມຄອງຂອງຂະແໜງການເງິນ;

32. ຄຸ້ມຄອງ, ຕິດຕາມ, ກວດກາ-ກວດການ ແລະ ຊຸກຍູ້ການປະຕິບັດໜ້າທີ່ການເມືອງ, ວຽກງານເສດຖະກິດ-ການເງິນ ຂອງພະນັກງານ-ລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງຂະແໜງການເງິນແຕ່ສູນກາງລົງຮອດທ້ອງຖິ່ນ;

33. ກວດກາການປະຕິບັດພັນທະງົບປະມານແຫ່ງລັດ ຂອງບັນດາຫົວໜ່ວຍວິສາຫະກິດ, ທຸລະກິດທັງພາກລັດ ແລະ ເອກະຊົນ, ຫົວໜ່ວຍງົບປະມານ, ກອງທຶນຂອງລັດ, ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ, ເງິນກູ້ຢືມ ແລະ ອົງການບໍລິຫານວິຊາການແຕ່ລະຂັ້ນ ທັງສູນກາງ ແລະ ທ້ອງຖິ່ນ;

34. ຕິດຕາມ, ກວດກາ-ກວດການ ວຽກງານພັກ-ພະນັກງານ, ສະກັດກັ້ນຕ້ານການສໍ້ລາດບັງຫຼວງ, ການປະຕິບັດຜົນຂອງການກວດກາ-ກວດສອບ, ການແກ້ໄຂຄໍາຮ້ອງຟ້ອງ, ຮ້ອງທຸກ, ຄໍາສະເໜີຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ແລະ ພົນລະເມືອງ ທີ່ພົວພັນເຖິງວຽກງານ ແລະ ຄວາມຮັບຜິດຊອບ ຂອງກະຊວງການເງິນ;

35. ປັບປຸງກົງຈັກການຈັດຕັ້ງ, ສ້າງແຜນກໍານົດພະນັກງານນໍາພາ-ຄຸ້ມຄອງ, ກໍານົດຕໍາແໜ່ງງານ, ຄົ້ນຄວ້າການ ບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ ຫຼື ງົດການປະຕິບັດໜ້າທີ່ຊົ່ວຄາວ, ປະເມີນຜົນ, ກໍ່ສ້າງ-ບໍາລຸງ, ຝຶກອົບຮົມ ແລະ ພັດທະນາ, ປະຕິບັດນະໂຍບາຍ ແລະ ວິໄນ ພະນັກງານ-ລັດຖະກອນຂະແໜງການເງິນ; ຍ້ອງຍໍ ຫຼື ສະເໜີຍ້ອງຍໍບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມກົດໝາຍ ແລະ ລະບຽບການ; ຄຸ້ມຄອງສາຍຕັ້ງດ້ານກົງຈັກການຈັດຕັ້ງ, ບຸກຄະລາກອນ, ດ້ານເຕັກນິກວິຊາການ, ງົບປະມານ, ສະຖານທີ່ເຮັດວຽກ, ພາຫະນະ ແລະ ວັດຖຸອຸປະກອນຕ່າງໆຂອງຂະແໜງພາສີ, ສ່ວຍສາອາກອນ ແລະ ຄັງເງິນ ຕາມກົດໝາຍ ແລະ ລະບຽບການ; ຄຸ້ມຄອງດ້ານວິຊາການ ກົງຈັກການຈັດຕັ້ງຂະແໜງການເງິນຢູ່ຂັ້ນທ້ອງຖິ່ນ ຕາມການແບ່ງຂັ້ນຄຸ້ມຄອງ;

36. ຄົ້ນຄວ້າເປົ້າໝາຍບຸກຄະລາກອນຕໍາແໜ່ງງານທີ່ມີມາດຖານ ແລະ ເງື່ອນໄຂສາກົນ ເພື່ອຕົກລົງແຕ່ງຕັ້ງເປັນຕົວແທນຂະແໜງການເງິນ ໄປປະຈໍາການ ຢູ່ສໍານັກງານຜູ້ຕາງໜ້າ ຢູ່ ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນອື່ນໆ (Attched/Advisers);

37. ຄົ້ນຄວ້າ ສ້າງ ແລະ ປັບປຸງ ຫຼັກສູດ, ຄູ່ມືການຮຽນ-ການສອນ ແລະ ການຝຶກອົບຮົມ; ກໍ່ສ້າງ-ບໍາລຸງ, ຝຶກອົບຮົມ ແລະ ພັດທະນາພະນັກງານ-ລັດຖະກອນຂອງຂະແໜງການເງິນ ແລະ ພັດທະນາຊັບພະຍາກອນມະນຸດ ດ້ານເສດຖະກິດ-ການເງິນ;

38. ພັດທະນາ, ຍົກລະດັບ, ຄຸ້ມຄອງ ແລະ ບໍາລຸງຮັກສາ ລະບົບຄຸ້ມຄອງຂໍ້ມູນຂ່າວສານການເງິນພາກລັດເປັນທັນສະໄໝ ແລະ ດີຈີຕອນ ຕາມແຜນຍຸດທະສາດຫັນເປັນດີຈີຕອນຂອງລັດຖະບານ;

39. ຄຸ້ມຄອງ, ຕິດຕາມ, ກວດກາ, ປະເມີນຜົນ ໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ ເພື່ອຮັບປະກັນການນໍາໃຊ້ງົບປະມານ ເຂົ້າໃນການພັດທະນາໂຄງການ ໃຫ້ມີປະສິດທິຜົນສູງ;

40. ເປັນໃຈກາງ ໃນການຄົ້ນຄວ້າ ແລະ ສ້າງຍຸດທະສາດການຮ່ວມມືກັບ ຄູ່ຮ່ວມພັດທະນາ, ລະດົມທຶນ, ອະນຸມັດ, ຄຸ້ມຄອງ, ຕິດຕາມ, ປະເມີນຜົນ, ຢັ້ງຢືນທຶນສົມທົບຂອງລັດຖະບານ ພ້ອມທັງ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດແຜນງານ, ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ເປັນແຕ່ລະໄລຍະໃຫ້ຂັ້ນເທິງຮັບຊາບຢ່າງເປັນປົກກະຕິ;

41. ເປັນໃຈກາງຄົ້ນຄວ້າ ແລະ ປະສານງານໃນການຮ່ວມມືຮອບດ້ານ ແລະ ຕິດຕາມ, ຊຸກຍູ້ບັນດາໂຄງການ, ການຮ່ວມມື, ການຊ່ວຍເຫຼືອ ແລະ ການລົງທຶນ ລະຫວ່າງ ລາວ-ຫວຽດນາມ ແລະ ລາວ-ຈີນ ໃນຂອບເຂດສິດຂອງຕົນ ຕາມການຕົກລົງຂອງລັດຖະບານໃນແຕ່ລະໄລຍະ;

42. ຄົ້ນຄວ້າ, ສ້າງແຜນ ແລະ ກຳນົດນະໂຍບາຍ ກ່ຽວກັບວຽກງານຈັດຊື້-ຈັດຈ້າງ; ຄຸ້ມຄອງຕິດຕາມກວດກາ ສັນຍາ, ຕົກລົງຮັບຮອງ, ແກ້ໄຂ, ໂຈະ ຫຼື ຍົກເລີກການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ;
43. ເປັນເຈົ້າການໃນການຄົ້ນຄວ້າ, ອະນຸມັດຮັບເອົາ, ຄຸ້ມຄອງ, ຕິດຕາມ, ປະເມີນຜົນ ຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານ ພາຍໃນ ແລະ ຕ່າງປະເທດ ພາຍໃຕ້ແຜນງານ, ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ;
44. ປະຕິບັດພັນທະສາກົນທີ່ ສປປ ລາວເຂົ້າເປັນພາຄີ, ພົວພັນ, ຮ່ວມມື ສອງຝ່າຍ, ຫຼາຍຝ່າຍ ແລະ ຄູ່ຮ່ວມພັດທະນາ ກ່ຽວກັບວຽກງານການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ການເງິນສາກົນ; ເປັນໃຈກາງປະສານງານ, ແລກປ່ຽນບົດຮຽນ ແລະ ເຈລະຈາ ສັນຍາ, ສົນທິສັນຍາກັບຕ່າງປະເທດ, ອາຊຽນ, ອະນຸພາກພື້ນ, ພາກພື້ນ ແລະ ອົງການຈັດຕັ້ງສາກົນ ຕາມລະບຽບການ;
45. ເປັນຕົວແທນຂອງລັດຖະບານ ແຫ່ງ ສປປ ລາວ ເຂົ້າໃນການຈັດຕັ້ງສະພາຜູ້ວ່າການ ທະນາຄານ ແລະ ບັນດາສະຖາບັນການເງິນສາກົນອື່ນໆ ຕາມລະບຽບການ;
46. ຄົ້ນຄວ້າ, ສັງລວມ, ສ້າງແຜນ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ພາຫະນະ, ເຄຫະສະຖານ, ທີ່ດິນ, ວັດຖຸອຸປະກອນ ແລະ ຊັບສົມບັດອື່ນ ຂອງກະຊວງການເງິນ ຕາມລະບຽບການ;
47. ເປັນເຈົ້າການ ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານເສດຖະກິດ-ການເງິນ, ປະສານສົມທົບກັບຂະແໜງການຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານເສດຖະກິດ-ການເງິນ;
48. ສະຫຼຸບລາຍງານ ການເຄື່ອນໄຫວວຽກງານຂອງກະຊວງການເງິນຮອບດ້ານ ໃນຂອບເຂດທົ່ວປະເທດ;
49. ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

ກະຊວງການເງິນມີຂອບເຂດສິດດັ່ງນີ້:

1. ສະເໜີ ລັດຖະບານ ພິຈາລະນາ ການສ້າງ ແລະ ປັບປຸງ ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມາດຕະການຕ່າງໆ ກ່ຽວກັບວຽກງານຕ່າງໆພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ;
2. ສະເໜີນະໂຍບາຍພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດການເງິນ, ງົບປະມານແຫ່ງລັດ, ແຜນຄຸ້ມດ່ຽງ ແລະ ຄຸ້ມຄອງເສດຖະກິດມະຫາພາກ;
3. ອອກຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການ ເພື່ອຄຸ້ມຄອງວຽກງານຂະແໜງການເງິນ ຕາມກົດໝາຍ ແລະ ລະບຽບການ;
4. ສະເໜີລັດຖະບານ ພິຈາລະນາດັດແກ້ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນການລົງທຶນຂອງລັດ ໄລຍະ 5 ປີ, ໄລຍະກາງ (1+2), ປະຈຳປີ ຕາມກົດໝາຍ ແລະ ລະບຽບການ;
5. ຕົກລົງດັດສະເລ່ຍລາຍຈ່າຍງົບປະມານແຫ່ງລັດຈາກພາກໜຶ່ງໄປໃສ່ພາກອື່ນທີ່ຢູ່ໃນແຜນງົບປະມານແຫ່ງລັດປະຈຳປີ ຂອງຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ;
6. ຕົກລົງຮັບຮອງ, ຕິດຕາມ-ກວດກາ, ໂຈະ, ຍົກເລີກ ຫົວໜ່ວຍວິຊາການເປັນເຈົ້າຕົນເອງທາງດ້ານງົບປະມານ-ການເງິນ ຕາມກົດໝາຍ ແລະ ລະບຽບການ;
7. ຄຸ້ມຄອງລາຍຮັບ-ລາຍຈ່າຍຂອງລັດ ຜ່ານບັນຊີລວມສູນຄັງເງິນ ຢູ່ທະນາຄານແຫ່ງ ສປປ ລາວ ຜ່ານລະບົບຄຸ້ມຄອງຂໍ້ມູນຂ່າວສານການເງິນພາກລັດ;
8. ເລັ່ງທວງ, ເກັບກູ້ຄືນ ເງິນ, ຊັບສິນ ຈາກຜົນການ ກວດກາ, ກວດສອບ ທີ່ມີການຢັ້ງຢືນ ຈາກອົງການກວດກາ, ກວດສອບຂັ້ນຕ່າງໆ ເຂົ້າງົບປະມານແຫ່ງລັດ ຕາມກົດໝາຍ ແລະ ລະບຽບການ;

9. ຕິດຕາມ, ກວດກາ, ເລັ່ງທວງ ແລະ ສັ່ງມອບ ທຸກແຫຼ່ງລາຍຮັບ ໃຫ້ລວມສູນເຂົ້າງົບປະມານແຫ່ງລັດ ພ້ອມທັງ ນຳໃຊ້ມາດຕະການຕ່າງໆ ຕໍ່ຜູ້ລະເມີດ ຢ່າງເຂັ້ມງວດ ກ່ຽວກັບ ການເລັ່ງທວງ ການແຈ້ງ-ມອບ ພັນທະ ແລະ ໜີ້ຄ້າງມອບ ຕາມກົດໝາຍ ແລະ ລະບຽບການ ຈົນກ້າວໄປເຖິງ ການດຳເນີນຄະດີຜ່ານ ຂະບວນການຍຸຕິທຳ ເປັນຕົ້ນ ການອາຍັດ ຊັບສິນ ຫຼື ບັນຊີທະນາຄານ ຕໍ່ຜູ້ລະເມີດດັ່ງກ່າວ ຢ່າງ ເດັດຂາດ;
10. ອະນຸຍາດ ເປີດ, ປິດ ບັນຊີເງິນຝາກສະເພາະ ຢູ່ທະນາຄານແຫ່ງ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ;
11. ອະນຸຍາດ ນຳໃຊ້, ມອບ-ໂອນ, ການປ່ຽນສິດຄຸ້ມຄອງ, ການສະສາງ, ຖອນຄືນຊັບສິນ, ການໃຫ້ເຊົ່າ ຫຼື ສຳປະທານ, ການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ ທີ່ເປັນຊັບສິນຂອງລັດ ຕາມກົດໝາຍ ແລະ ລະບຽບການ;
12. ອະນຸມັດ, ອອກຄຳສັ່ງຈ່າຍ ເງິນງົບປະມານປະຈຳປີ ຕາມແຜນສະພາແຫ່ງຊາດຮັບຮອງ ແລະ ສັ່ງເຄື່ອນຍ້າຍເງິນໃນລະບົບຄັງເງິນແຫ່ງລັດ;
13. ອອກອະນຸຍາດການສ້າງຕັ້ງ ລະບົບສາງພາສີ, ເຂດປອດພາສີ, ຮ້ານຄ້າປອດພາສີ, ລະບົບໂລຈິສຕິກ, ເຂດບໍລິການຂົນສົ່ງ ແລະ ການດຳເນີນທຸລະກິດປະກັນໄພ, ຄົນກາງປະກັນໄພ ແລະ ທຸລະກິດທີ່ລັດຖື ຮຸ້ນອື່ນໆ ທີ່ຂຶ້ນກັບການຄຸ້ມຄອງຂອງກະຊວງການເງິນ;
14. ຕົກລົງສ້າງຕັ້ງ ຫຼື ຍຸບເລີກ ຫົວໜ່ວຍງົບປະມານແຫ່ງລັດຂັ້ນສອງ ທີ່ຂຶ້ນກັບຫົວໜ່ວຍງົບປະມານ ຂັ້ນໜຶ່ງ ຂອງບັນດາຂະແໜງການຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ;
15. ພິຈາລະນາອອກຄຳສັ່ງ ໂຈະຊົ່ວຄາວ, ຍຸບເລີກຖາວອນ ຫົວໜ່ວຍວິສາຫະກິດທີ່ກະຊວງການເງິນ ຫຼື ຂະແໜງການອື່ນ ອອກອະນຸຍາດສ້າງຕັ້ງ ໃນກໍລະນີເຄື່ອນໄຫວບໍ່ຖືກຕ້ອງ ຕາມຂອບເຂດສິດທີ່ກົດ ໝາຍ ແລະ ລະບຽບການກຳນົດ;
16. ກວດກາ, ດັດສົມ ແລະ ຈັດລຽງບູລິມະສິດ, ການສະເໜີໂຄງການລົງທຶນຂອງລັດຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເຂົ້າແຜນປະຈຳປີ ແລະ 5 ປີ ເພື່ອສະເໜີ ລັດຖະບານ ພິຈາລະນາ;
17. ໂຈະ ຫຼື ຍົກເລີກ ການເຄື່ອນໄຫວບັນຊີເງິນຝາກຂອງຫົວໜ່ວຍງົບປະມານ, ກອງທຶນຂອງລັດ ແລະ ຢູ່ ຄັງເງິນແຫ່ງລັດ ຕາມການສະເໜີຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;
18. ສັ່ງໂຈະ, ແກ້ໄຂ ຫຼື ຍົກເລີກ ການນຳໃຊ້ງົບປະມານຂອງອົງການຈັດຕັ້ງລັດ ເຂົ້າໃນການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ທີ່ບໍ່ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;
19. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າການສະເໜີ ຂໍທຶນເພີ່ມ, ຂໍຕໍ່ໄລຍະປະຕິບັດໂຄງການ ແລະ ການສະເໜີຕ່າງໆທີ່ກ່ຽວຂ້ອງກັບແຫຼ່ງທຶນ ໃນການຈັດຕັ້ງປະຕິບັດໂຄງການ ເພື່ອສະເ ໜີລັດຖະບານ ພິຈາລະນາ;
20. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າຕໍ່ການສະເໜີດັດແກ້ມູນຄ່າໂຄງການລົງທຶນຂອງລັດ, ການສະເໜີ ດັດແກ້, ໂຈະ, ອວ່າຍ ແລະ ຍົກເລີກ ໂຄງການລົງທຶນຂອງລັດ ຕາມການສະ ເໜີຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ແຂວງ;
21. ສະເໜີ ແຜນ, ມາດຕະການ, ວິທີການ ໃນການແກ້ໄຂໜີ້ສິນສາທາລະນະ, ໜີ້ສິນພາຍໃນ ຕໍ່ລັດຖະບານ ແຕ່ລະໄລຍະ ພ້ອມທັງ ລະດົມທຶນ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອດຸ່ນດ່ຽງງົບປະມານ ແລະ ບໍລິຫານໜີ້ສິນ ຕາມກົດໝາຍ ແລະ ລະບຽບການ;
22. ລຶບລ້າງໜີ້ສິນທີ່ຕິດພັນກັບພັນທະງົບປະມານທີ່ຮຽກເກັບບໍ່ໄດ້ ຕາມຄຳຕັດສິນຂອງສານ, ການຕົກລົງຂອງສະພາແຫ່ງຊາດ ຫຼື ອົງການທີ່ມີສິດອຳນາດ;
23. ອອກຄຳສັ່ງ ເປີດການສືບສວນ-ສອບສວນຄະດີ ຕາມກົດໝາຍ ແລະ ລະບຽບການ;

24. ຕິກລິງຮັບສິນຄ້າ, ເຄື່ອງຂອງ ທີ່ເປັນຂອງກາງໃນການກະທຳຜິດ (ທີ່ບໍ່ພົວພັນກັບຄະດີ ທາງແພ່ງ ຫຼື ທາງອາຍາ) ໂດຍທີ່ເຈົ້າຂອງສະຫຼະສິດ, ບໍ່ມີເຈົ້າຂອງມາພົວພັນຕາມກຳນົດເວລາ ມາເປັນຂອງລັດ ຕາມກົດໝາຍ ແລະ ລະບຽບການ;
25. ຕົກລົງປະມູນຂາຍອອກ ສິນຄ້າ, ເຄື່ອງຂອງ ທີ່ເປັນຂອງກາງ, ກຳລັງດຳເນີນຄະດີທາງແພ່ງ ຫຼື ທາງອາຍາ ເພື່ອເກັບເງິນຮັກສາໄວ້ໃນບັນຊີສະເພາະ ຢູ່ລະບົບຄັງເງິນແຫ່ງລັດ ໃນໄລຍະລໍຖ້າການສິ້ນສຸດຄະດີ ຕາມກົດໝາຍ ແລະ ລະບຽບການ;
26. ເຂົ້າຮ່ວມ ແລະ ລົງນາມເຊັນ ສັນຍາ, ອານຸສັນຍາ, ບົດບັນທຶກຄວາມເຂົ້າໃຈ ກັບ ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານເສດຖະກິດ-ການເງິນ ຕາມການມອບໝາຍຂອງລັດຖະບານ;
27. ເປັນເຈົ້າການ ຄົ້ນຄວ້າ ປະກອບຄຳເຫັນ ແລະ ຕົກລົງ ກ່ຽວກັບ ການສະເໜີໃຫ້ນະໂຍບາຍຕ່າງໆ ທີ່ຕິດພັນກັບການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ, ການພັດທະນາເຂດເສດຖະກິດພິເສດ, ນິຄົມອຸດສາຫະກຳ ແລະ ນິຄົມອື່ນໆ ທີ່ເກີນກົດໝາຍສົ່ງເສີມການລົງທຶນ ແລະ ລະບຽບການຂອງລັດຖະບານ ກຳນົດ ແລະ ປະກາດໃຊ້ແຕ່ລະໄລຍະ;
28. ພົວພັນ, ຮ່ວມມື, ລົງນາມ ເຊັນສັນຍາ, ອະນຸສັນຍາ, ຍາດແຍ່ງການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານເສດຖະກິດ-ການເງິນ ຕາມກົດໝາຍ ແລະ ລະບຽບການ;
29. ຄົ້ນຄວ້າ, ມີຄຳເຫັນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພ້ອມທັງ ປະຕິບັດນະໂຍບາຍ, ຍ້ອງຍໍ ແລະ ວິໄນ ຕໍ່ສະມາຊິກພັກ, ພະນັກງານ-ລັດຖະກອນຂອງຂະແໜງການເງິນ ສູນກາງ ແລະ ທ້ອງຖິ່ນ ຕາມການແບ່ງຂັ້ນຄຸ້ມຄອງ;
30. ຄຸ້ມຄອງຖານຂໍ້ມູນສະຖິຕິແຫ່ງຊາດ, ເລັ່ງທວງ, ເຂົ້າເຖິງ, ເຊື່ອມໂຍງຖານຂໍ້ມູນສະຖິຕິຂອງຂະແໜງການທີ່ກ່ຽວຂ້ອງ ເພື່ອວິເຄາະ-ວິໄຈຂໍ້ມູນ ໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຢ່າງລວມສູນໂດຍຜ່ານສູນສະຖິຕິແຫ່ງຊາດ ແລະ ລະບົບຄຸ້ມຄອງຂໍ້ມູນຂ່າວສານການເງິນພາກລັດ;
31. ເປັນໃຈກາງປະສານ, ຄຸ້ມຄອງ, ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດວຽກງານສະຖິຕິແຫ່ງຊາດ, ຮັບຮອງຫຼັກການວິທີວິທະຍາສາດດ້ານສະຖິຕິໃນທົ່ວລະບົບສະຖິຕິແຫ່ງຊາດ; ຮັບຮອງ, ປະກາດໃຊ້, ເຜີຍແຜ່ຂໍ້ມູນສະຖິຕິທາງການລະດັບຊາດ ແລະ ຜົນການສຳຫຼວດຕ່າງໆ;
32. ຕ້ານ, ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຂົງເຂດເສດຖະກິດ-ການເງິນ ຕາມກົດໝາຍ ແລະ ລະບຽບການ;
33. ຕິດຕາມ, ຊຸກຍູ້, ກວດກາພັກ-ພະນັກງານ, ກວດກາການເງິນ, ກວດກາການລົງທຶນ, ສະກັດກັ້ນຕ້ານການສໍ້ລາດບັງຫຼວງ ພ້ອມທັງກວດກາການແກ້ໄຂຜົນຂອງການກວດກາ-ກວດສອບ ໃນຂົງເຂດການເງິນ ຕາມກົດໝາຍ ແລະ ລະບຽບການ;
34. ຄຸ້ມຄອງ, ຕິດຕາມ, ຊຸກຍູ້, ກວດກາ ບັນດາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນການຫຼົບຫຼີກ, ເຊື່ອງອຳພັນທະງົບປະມານແຫ່ງລັດ ໃນການປະຕິບັດກົດໝາຍວ່າດ້ວຍການກວດກາລັດ, ກົດໝາຍວ່າດ້ວຍການສໍ້ລາດບັງຫຼວງ ແລະ ກົດໝາຍອື່ນໆ;
35. ນຳໃຊ້ງົບປະມານ, ພາຫະນະ, ເຄຫະສະຖານ, ທີ່ດິນ, ວັດຖຸອຸປະກອນ ແລະ ຊັບສິນບັດອື່ນ ທີ່ກະຊວງການເງິນຄຸ້ມຄອງ ຕາມລະບຽບການ;
36. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງ ຄະນະລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກ ຂອງກະຊວງການເງິນ ປະກອບດ້ວຍ:

**1. ກົງຈັກຄຸ້ມຄອງຂັ້ນສູນກາງ**

1. ຫ້ອງການ;
2. ກົມຈັດຕັ້ງ;
3. ກົມກວດກາລັດ;
4. ກົມງົບປະມານແຫ່ງລັດ;
5. ກົມນະໂຍບາຍເສດຖະກິດ ແລະ ການເງິນ;
6. ກົມແຜນການ;
7. ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ;
8. ກົມຮ່ວມມື ແລະ ການເງິນສາກົນ;
9. ກົມສ່ວຍສາອາກອນ;
10. ກົມພາສີ;
11. ຄັງເງິນແຫ່ງລັດ;
12. ກົມຄຸ້ມຄອງຊັບສິນແຫ່ງລັດ;
13. ກົມຄຸ້ມຄອງວິສາຫະກິດການເງິນ;
14. ກົມຄຸ້ມຄອງໜີ້ສິນສາທາລະນະ;
15. ກົມຄຸ້ມຄອງການບັນຊີ;
16. ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ;
17. ສະຖາບັນເສດຖະກິດ-ການເງິນ.
18. ຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ;
19. ຫ້ອງການຄະນະກຳມະການຮ່ວມມື ລາວ-ຈີນ.

❖ **ຫົວໜ່ວຍວິຊາການລະດັບ 2 ຂຶ້ນກັບກະຊວງ**

1. ສະຖາບັນເສດຖະກິດ-ການເງິນ ສາຂາພາກເໜືອ;
2. ສະຖາບັນເສດຖະກິດ-ການເງິນ ສາຂາພາກໃຕ້.

**2. ກົງຈັກທຽບເທົ່າທະບວງ**

ສູນສະຖິຕິແຫ່ງຊາດ ມີ 02 ກົມຂຶ້ນກັບ ຄື:

1. ກົມສະຖິຕິເສດຖະກິດ ແລະ ສັງຄົມ;
2. ກົມສະຖິຕິສິ່ງແວດລ້ອມ ແລະ ຄວາມໝັ້ນຄົງ.

ສຳລັບ ສູນສະຖິຕິແຫ່ງຊາດ, ຫ້ອງການຄະນະກຳມະການຮ່ວມມືລາວ-ຫວຽດນາມ ແລະ ຫ້ອງການຄະນະກຳມະການຮ່ວມມືລາວ-ຈີນ ໄດ້ກຳນົດໃນ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ (ພາລະ

ບົດບາດ) ສະເພາະ ແລະ ມີຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມ ທີ່ຂຶ້ນກັບ ສູນສະຖິຕິແຫ່ງຊາດ.

**3. ກົງຈັກຄຸ້ມຄອງຕາມສາຍຕັ້ງ ປະກອບມີ:**

1. ສ່ວຍສາອາກອນປະຈໍາ ນະຄອນຫຼວງ, ແຂວງ, ເຂດເສດຖະກິດພິເສດ (ສະເພາະແຂວງທີ່ມີເຂດເສດຖະກິດພິເສດ), ນະຄອນ, ເມືອງ;
2. ພາສີປະຈໍາ ພາກ, ດ່ານຊາຍແດນສາກົນ, ດ່ານສະໜາມບິນສາກົນ, ດ່ານຊາຍແດນທ້ອງຖິ່ນ, ດ່ານຊາຍແດນປະເພນີ, ຫ້ອງການພາສີປະຈໍາ ລະບົບສາງ, ສະຖານີລົດໄຟ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດອື່ນ;
3. ຄັງເງິນປະຈໍາ ນະຄອນຫຼວງ, ແຂວງ, ນະຄອນ, ເມືອງ.

**4. ກົງຈັກຄຸ້ມຄອງດ້ານວິຊາການ ຢູ່ຂັ້ນທ້ອງຖິ່ນ ປະກອບມີ:**

ກະຊວງການເງິນ ມີກົງຈັກຄຸ້ມຄອງດ້ານວິຊາການຂອງຕົນ ຢູ່ຂັ້ນທ້ອງຖິ່ນ ຕາມເງື່ອນໄຂຕົວຈິງ ຢູ່ແຕ່ລະຂັ້ນ ຕາມການຕົກລົງຂອງອົງການປົກຄອງທ້ອງຖິ່ນ ໂດຍເອກະພາບກັບ ກະຊວງການເງິນ ແລະ ຄະນະຈັດຕັ້ງສູນກາງພັກ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ໂຄງປະກອບບຸກຄະລາກອນຂອງ ກະຊວງການເງິນ ປະກອບມີດັ່ງນີ້:

1. ລັດຖະມົນຕີ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີຜູ້ຊີ້ນໍາຂົງເຂດວຽກງານການເງິນ ໃນການຄຸ້ມຄອງມະຫາພາກ ຕາມຂະແໜງ ການຕົນຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍລັດຖະບານ; ໃນເວລາຕິດຂັດລັດຖະມົນຕີ ຕ້ອງມອບສິດໃຫ້ຮອງລັດຖະມົນຕີ ທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ;
2. ຮອງລັດຖະມົນຕີຈໍານວນໜຶ່ງ ຊ່ວຍລັດຖະມົນຕີ ໃນການຊີ້ນໍາວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງລັດຖະມົນຕີ; ຮອງລັດຖະມົນຕີ ເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີ ຕິດຂັດ;
3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກ, ຮອງຫົວໜ້າພະແນກ, ຮອງຫົວໜ້າອົງການລັດທຽບເທົ່າພະແນກ ແລະ ລັດຖະກອນວິຊາການຈໍານວນ ໜຶ່ງ ຕາມການກໍານົດຕໍາແໜ່ງງານ;
4. ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກໍານົດໄວ້.

ສ່ວນຕໍາແໜ່ງຂອງຫົວໜ້າ ແລະ ຮອງຫົວໜ້າສູນສະຖິຕິແຫ່ງຊາດ ແລະ ປະທານ ແລະ ຮອງປະທານກໍາມາທິການຮ່ວມມືລາວ-ຫວຽດນາມ ແລະ ຄະນະກໍາມາທິການຮ່ວມມືລາວ-ຈີນ ແມ່ນ ໄດ້ກໍານົດໄວ້ໃນ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ສະເພາະ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

ກະຊວງການເງິນ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການນຳພາເປັນໝູ່ຄະນະ, ລວມສູນປະຊາທິປະໄຕ ໃນການພິຈາລະນາຕົກລົງ, ຮັບຮອງບັນຫາທີ່ສຳຄັນ ກ່ຽວກັບວຽກງານຂອງຂະແໜງການເງິນ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍ ຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານຂອງກະຊວງການເງິນແມ່ນຈັດຕັ້ງປະຕິບັດຕາມ ກົດໝາຍ ແລະ ລະບຽບການ; ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ; ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດພັດທະນາຂະແໜງການເງິນ ແລະ ແຜນດຳເນີນງານຂອງກະຊວງການເງິນ ໃນແຕ່ລະໄລຍະ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

ກະຊວງການເງິນ ມີແບບແຜນວິທີການເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງກົມກຽວກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ແນໃສ່ໜູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານຂະແໜງການເງິນ;
2. ເຮັດວຽກມີການ ຕິດຕາມ, ກວດກາ, ສະຫຼຸບ, ຖອດຖອນບົດຮຽນ ແລະ ກຳນົດທິດທາງ ໃນການຈັດຕັ້ງປະຕິບັດ ການເຄື່ອນໄຫວວຽກງານ ແຕ່ລະໄລຍະ (ປະຈຳ ເດືອນ, 03 ເດືອນ, 06 ເດືອນ, ປີ) ແລະ ປະຊຸມ, ສ່ອງແສງ, ລາຍງານ ຕາມລະບຽບການ;
3. ປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ປະຈຳປີ ແລະ ປະເມີນຜົນສະເພາະກ່ອນການແຕ່ງຕັ້ງ, ຍົກຍ້າຍ, ກ່ອນສິ້ນສຸດ ຫຼື ພາຍຫຼັງສຳເລັດການປະຕິບັດໜ້າທີ່ວຽກງານໃດໜຶ່ງຕາມກົດໝາຍ ແລະ ລະບຽບການ;
4. ປະຕິບັດລະບອບພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ, ຕາປະທັບ, ກາໝາຍ ແລະ ເຄື່ອງແບບ**

ກະຊວງການເງິນ ມີງົບປະມານ, ຕາປະທັບ, ກາໝາຍ ແລະ ເຄື່ອງແບບຂອງຕົນ ເພື່ອຮັບໃຊ້ເຄື່ອນໄຫວວຽກງານທາງລັດຖະການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີກະຊວງການເງິນ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງບັນດາກົມ ແລະ ທຽບເທົ່າກົມ ແລະ ກົງຈັກການຈັດຕັ້ງຂອງທ້ອງຖິ່ນ ທີ່ຢູ່ພາຍໃຕ້ການຊີ້ນຳດ້ານວິຊາການທີ່ລະບຸໄວ້ໃນມາດຕາ 5 ຂອງດຳລັດສະບັບນີ້ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ, ມອບຄວາມຮັບຜິດຊອບຢ່າງຈະແຈ້ງ, ຮັດກຸມ ແລະ ສອດຄ່ອງກັບໜ້າທີ່ການເມືອງ ຂອງ ຂະແໜງການເງິນ ໃນແຕ່ລະໄລຍະ.

ມາດຕາ 11 ການຈັດຕັ້ງປະຕິບັດ

ກະຊວງການເງິນ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງວຽງຈັນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 12 ຜົນສັກສິດ

ດໍາລັດສະບັບນີ້ ປ່ຽນແທນ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 353/ນຍ, ລົງວັນທີ 02 ສິງຫາ 2024, ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021 ແລະ ມີຜົນສັກສິດນໍາໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ